ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Lao People' s Democratic Republic

Peace Independence Democracy Unity Prosperity

# ບົດລາຍງານສະຖິຕິການເງິນແຫ່ງລັດປະຈຳ ໄຕມາດ 1 ປີ 2019





ກະຊວງການເງິນ, ກົມນະໂຍບາຍການເງິນ ແລະ ນິຕິກຳ

Ministry of Finance, Fiscal Policy and Law Department

# ບົດລາຍງານສະຖິຕິການເງິນແຫ່ງລັດ
# ປະຈຳໄຕມາດ I ປີ 2019

## ສະພາບລວມການຈັດຕັ້ງປະຕິບັດງົບປະມານ ປະຈຳ ໄຕມາດ 1 ປີ 2019

ບົດລາຍງານນີ້ໄດ້ສັງລວມຂໍ້ມູນຕົວເລກ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳໄຕມາດ 1 ປີ 2019 (ເດືອນມັງກອນ ຫາ ເດືອນມີນາ) ພ້ອມດຽວກັນນັ້ນ ກໍ່ໄດ້ສົມທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພື່ອສົມທຽບໃຫ້ເຫັນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດງົບປະມານ ໃນແຕ່ລະໄລຍະ, ລາຍລະອຽດ ດັ່ງນີ້:

ລາຍຮັບງົບປະມານທັງໝົດ (ລາຍຮັບພາຍໃນ+ລາຍຮັບຈາກການຊ່ວຍເຫຼືອລ້າ) ປະຈຳໄຕມາດ 1 ປີ 2019 ມີທ່າອຽງເພີ່ມຂຶ້ນ ສາມາດປະຕິບັດໄດ້ 5.697 ຕື້ກີບ ເທົ່າກັບ 21,7% ຂອງແຜນງົບປະມານປະຈຳປີ ຫຼື ເທົ່າກັບ 3,44% ຂອງ GDP ເພີ່ມຂຶ້ນ 9,5% ເມື່ອທຽບກັບໄລຍະດຽວກັນຂອງປີ 2018, ເນື່ອງຈາກ ການຈັດຕັ້ງປະຕິບັດຈັດເກັບລາຍຮັບພາຍໃນໄດ້ດີ ໂດຍສະເພາະ ລາຍຮັບພາສີ-ອາກອນ ປະຕິບັດໄດ້ 4.629 ຕື້ກີບ ເພີ່ມຂຶ້ນ 9,8% ທຽບກັບໄລຍະດຽວກັນຂອງປີ 2018,ໃນຂະນະທີ່ລາຍຮັບຈາກການຊ່ວຍເຫຼືອລ້າຫຼຸດລົງ 24,8% ສ່ວນການໃຊ້ຈ່າຍງົບປະມານທັງໝົດປະຈຳໄຕມາດ 1 ປີ 2019 ປະຕິບັດໄດ້ 5.891 ຕື້ກີບ ເທົ່າກັບ 17,6%ຂອງແຜນງົບປະມານປະຈຳປີ ຫຼື ເທົ່າກັບ 3,56% ຂອງ GDP ຫຼຸດລົງ 10,8% ທຽບກັບໄລຍະດຽວກັນຂອງປີ 2018 ສາເຫດຍ້ອນການຫຼຸດລົງຂອງລາຍຈ່າຍລົງທຶນຂອງລັດ ປະຕິບັດໄດ້ 1.741 ຕື້ກີບ ຫຼຸດລົງ 38,2% ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2018 (ເສັ້ນສະແດງ 1)

ຈາກຜົນການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃນໄຕມາດ 1 ຂອງປີ 2019 ເຫັນໄດ້ວ່າ ການຂາດດຸນງົບປະມານຫຼຸດລົງຈາກ ຂາດດຸນ 1.403 ຕື້ກີບໃນ ໄຕມາດ 1 ປີ 2018 ມາເປັນ 194 ຕື້ກີບ ໃນ ປີ 2019 ຫຼື ຫຼຸດລົງຈາກ 0,9% ຂອງ GDP ໃນ ປີ 2018 ມາເປັນ 0,12% ຂອງ GDP ໃນປີ 2019 ແລະ ການດຸ່ນດ່ຽງລາຍຮັບພາຍໃນ ຕໍ່ກັບລາຍຈ່າຍບໍລິຫານປົກກະຕິ ສາມາດປະຕິບັດໄດ້ດີຂຶ້ນ ແລະ ເກີນດູນເພີ່ມຂຶ້ນຈາກ 0,86% ຂອງ GDP ໃນໄຕມາດ 1 ປີ 2018 ມາເປັນ 0,89% ຕໍ່ GDP ໃນໄຕມາດ 1 ປີ 2019 (ຕາຕະລາງ 1).

**ເສັ້ນສະແດງ 1 ການຈັດຕັ້ງປະຕິບັດງົບປະມານປະຈຳໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຫົວໜ່ວຍຕື້ກີບ; %)**




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 1: ການຈັດຕັ້ງປະຕິບັດງົບປະມານ ປະຈຳໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຫົວໜ່ວຍ %)**

| | % ທຽບໃສ່ແຜນ ງົບປະມານ 2018 | % ຕໍ່ GDP 2018 | % ທຽບໃສ່ແຜນ ງົບປະມານ 2019 | % ຕໍ່ GDP 2019 |
|---|---|---|---|---|
| **ລາຍຮັບທັງໝົດ** | **21.0%** | **3.41** | **21.7%** | **3.44** |
| **ລາຍຮັບພາຍໃນ** | **23.1%** | **3.34** | **23.3%** | **3.40** |
| ລາຍຮັບພາສີ-ອາກອນ | 23.7% | 2.77 | 24.7% | 2.80 |
| ລາຍຮັບບໍ່ແມ່ນພາສີ-ອາກອນ | 20.5% | 0.58 | 18.4% | 0.60 |
| **ລາຍຮັບຈາກການຊ່ວຍເຫຼືອລ້າ** | **3.8%** | **0.07** | **3.8%** | **0.05** |
| **ລາຍຈ່າຍທັງໝົດ** | **20.1%** | **4.33** | **17.6%** | **3.56** |
| ລາຍຈ່າຍບໍລິຫານປົກກະຕິ | 18.8% | 2.49 | 18.9% | 2.51 |
| ລາຍຈ່າຍລົງທຶນຂອງລັດ | 22.2% | 1.85 | 15.2% | 1.05 |
| **ດຸ່ນດ່ຽງທີ່ເປັນເງິນສົດ** | **68.8%** | **0.86** | **66.4%** | **0.89** |
| **ດຸ່ນດ່ຽງ** | **17.5%** | **-0.90** | **2.7%** | **-0.12** |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ເສັ້ນສະແດງ 2 ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຫົວໜ່ວຍຕື້ກີບ; %)**




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

## I. ການຈັດຕັ້ງປະຕິບັດລາຍຮັບງົບປະມານແຫ່ງລັດ ປະຈຳໄຕມາດ 1 ປີ 2019

ໃນໄຕມາດ 1 ຂອງ ປີ 2019 ລາຍຮັບທັງໝົດ (ບໍ່ລວມລາຍຮັບຈາກການຂາຍຊັບສິນ ແລະ ຕົ້ນທຶນເງິນກູ້ຢືມປ່ອຍຕໍ່ຈຳນວນ 196.3 ຕື້ກີບ) ປະຕິບັດໄດ້ 5.697 ຕື້ກີບ ຫຼື ເທົ່າກັບ 21,7% ຂອງແຜນງົບປະມານ, ລາຍຮັບພາຍໃນ ສາມາດຈັດຕັ້ງປະຕິບັດໄດ້ 5.618 ຕື້ກີບ, ເທົ່າກັບ 23,3% ຂອງແຜນ ແລະ ລາຍຮັບຈາກການຊ່ວຍເຫຼືອລ້າປະຕິບັດໄດ້ 79 ຕື້ກີບ, ເທົ່າກັບ 3,8% ຂອງແຜນ. ໃນນີ້ ລາຍຮັບພາສີ-ອາກອນປະຕິບັດໄດ້ 4.629 ຕື້ກີບ, ເທົ່າກັບ 24,7% ແລະ ລາຍຮັບບໍ່ແມ່ນພາສີ-ອາກອນ ປະຕິບັດໄດ້ 989 ຕື້ກີບ, ເທົ່າກັບ 18,4% ຂອງແຜນ.

ການຈັດຕັ້ງປະຕິບັດລາຍຮັບງົບປະມານທັງໝົດເພີ່ມຂຶ້ນ 9,5% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຖິງແມ່ນວ່າລາຍຮັບຈາກການຊ່ວຍເຫຼືອລ້າມີຈັງຫວະຫຼຸດລົງເຖິງ 24,5% (1) ແຕ່ການຈັດຕັ້ງປະຕິບັດຈັດເກັບລາຍຮັບພາຍໃນ ແມ່ນໄດ້ດີພໍສົມຄວນ ໂດຍສະເພາະລາຍຮັບພາສີ-ອາກອນ ເພີ່ມຂຶ້ນ 9,8% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ (ຕາຕະລາງ 2).

**ຕາຕະລາງ 2: ສະຫຼຸບການຈັດຕັ້ງປະຕິບັດລາຍຮັບທັງໝົດ ໃນໄຕມາດ 1 ປີ 2018 ແລະ 2019 (ຫົວໜ່ວຍ ຕື້ກີບ)**

| | ມັງກອນ-ມີນາ 2018 | % ສັດສ່ວນ | ມັງກອນ-ມີນາ 2019 | % ສັດສ່ວນ | % ການເພີ່ມ ຫຼື ລຸດ | ທຽບໃສ່ແຜນງົບປະມານ |
|---|---|---|---|---|---|---|
| **ລາຍຮັບທັງໝົດ** | **5,201** | **100** | **5,697** | **100** | **9.5%** | **21.7%** |
| **ລາຍຮັບພາຍໃນ** | **5,097** | **98.0** | **5,618** | **98.6** | **10.2%** | **23.3%** |
| ລາຍຮັບພາສີ-ອາກອນ | 4,215 | 82.7 | 4,629 | 82.4 | 9.8% | 24.7% |
| ລາຍຮັບບໍ່ແມ່ນພາສີ-ອາກອນ | 881 | 20.9 | 989 | 17.6 | 12.2% | 18.4% |
| **ລາຍຮັບຈາກການຊ່ວຍເຫຼືອລ້າ** | **104** | **2.0** | **79** | **1.4** | **-24.5%** | **3.8%** |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ເສັ້ນສະແດງ 3 ການຈັດຕັ້ງປະຕິບັດລາຍຮັບທັງໝົດ ໃນໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຫົວໜ່ວຍຕື້ກີບ; %)**




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

(1) ເນື່ອງຈາກຍັງບໍ່ທັນມີຂໍ້ມູນລາຍຮັບຈາກການຊ່ວຍເຫຼືອລ້າ ຈາກກະຊວງແຜນການ ແລະ ການລົງທຶນ ຄຸ້ມຄອງ

1) ການຈັດຕັ້ງປະຕິບັດລາຍຮັບພາສີ-ອາກອນ

ລາຍຮັບຈາກພາສີ-ອາກອນ ໃນໄຕມາດ 1 ປີ 2019 ປະຕິບັດໄດ້ 4.629 ຕື້ກີບ, ເພີ່ມຂຶ້ນ 9,8% ທຽບກັບໄລຍະດຽວກັນຂອງປີຜ່ານມາ ກວມເອົາ 82,4% ຂອງລາຍຮັບພາຍໃນ. ລາຍຮັບຈາກພາສີອາກອນເພີ່ມຂຶ້ນ ແມ່ນມາຈາກ ການເພີ່ມຂຶ້ນຂອງລາຍຮັບຈາກ ອາກອນຊົມໃຊ້, ອາກອນກຳໄລ, ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ ຊຶ່ງກວມເອົາອັດຕາສ່ວນຫຼາຍໃນລາຍຮັບພາສີ-ອາກອນ. ນອກຈາກນີ້ ລາຍຮັບຈາກ ຄ່າທຳນຽມຕ່າງໆ, ຄ່າຊົບພະຍາກອນທຳມະຊາດ ແລະ ລາຍຮັບຄ່າພາກຫຼວງກໍ່ມີທ່າອຽງເພີ່ມຂຶ້ນທຽບໃສ່ໄລຍະດຽວກັນ ຂອງປີ 2018; ໃນຂະນະທີ່ພາສີຂາເຂົ້າ, ພາສີຂາອອກ ແລະ ລາຍຮັບຈາກການຂາຍໄມ້ມີທ່າອຽງຫຼຸດລົງ (ຕາຕະລາງ 3).

2) ການຈັດຕັ້ງປະຕິບັດລາຍຮັບທີ່ບໍ່ແມ່ນພາສີ-ອາກອນ

ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ ໃນໄຕມາດ 1 ປີ 2019 ປະຕິບັດໄດ້ 989 ຕື້ກີບ ເພີ່ມຂຶ້ນ 12,2% ທຽບໃສ່ໄລຍະດຽວກັນຂອງປີ 2018 ແລະ ກວມເອົາ 17,6%ຂອງລາຍຮັບພາຍໃນ. ລາຍຮັບບໍ່ແມ່ນພາສີ-ອາກອນ ເຫັນວ່າການເພີ່ມຂຶ້ນບໍ່ຫຼາຍ ເນື່ອງຈາກເງິນປັນຜົນ ຊຶ່ງເປັນລາຍຮັບຫຼັກຂອງລາຍຮັບບໍ່ແມ່ນພາສີ-ອາກອນ ຫຼຸດລົງ 3,4% ເມື່ອທຽບກັບໄລຍະດຽວກັນຂອງປີຜ່ານມາ; ສ່ວນຄ່າບິນຜ່ານ, ດອກເບ້ຍເງິນກູ້ ແລະ ລາຍຮັບບໍລິຫານວິຊາການ ແລະ ຄ່າສຳປະທານ ຍັງສືບຕໍ່ເພີ່ມຂຶ້ນ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດລາຍຮັບທີ່ບໍ່ແມ່ນພາສີ-ອາກອນ ໂດຍລວມເພີ່ມຂຶ້ນ (ຕາຕະລາງ 3).

**ຕາຕະລາງ 3: ການຈັດຕັ້ງປະຕິບັດລາຍຮັບພາຍໃນ ໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຫົວໜ່ວຍ ຕື້ກີບ)**

| ລ/ດ | ເນື້ອໃນ | ມັງກອນ-ມີນາ 2018 | ອັດຕາສ່ວນ | ມັງກອນ-ມີນາ 2019 | ອັດຕາສ່ວນ | % ເພີ່ມ ຫຼື ຫຼຸດ |
|---|---|---|---|---|---|---|
| **I** | **ລາຍຮັບຈາກພາສີ-ອາກອນ** | **4,215.18** | **100** | **4,628.95** | **100** | **9.8%** |
| 1 | ອາກອນກຳໄລ | 361.01 | 8.6 | 479.80 | 10.4 | 32.9% |
| 2 | ອາກອນລາຍໄດ້ | 415.34 | 9.9 | 420.81 | 9.1 | 1.3% |
| 3 | ພາສີທີ່ດິນ | - | 0.0 | 28.66 | 0.6 | |
| 4 | ຄ່າຈົດທະບຽນທຸລະກິດ | - | 0.0 | - | 0.0 | |
| 5 | ອາກອນຕ່ຳສຸດ | - | 0.0 | - | 0.0 | |
| 6 | ອາກອນຕົວເລກທຸລະກິດ | - | 0.0 | - | 0.0 | |
| 7 | ອາກອນມູນຄ່າເພີ່ມ | 1,411.87 | 33.5 | 1,475.06 | 31.9 | 4.5% |
| 8 | ອາກອນຊົມໃຊ້ | 1,198.24 | 28.4 | 1,347.58 | 29.1 | 12.5% |
| 9 | ພາສີຂາເຂົ້າ | 282.45 | 6.7 | 253.32 | 5.5 | -10.3% |
| 10 | ພາສີຂາອອກ | 10.24 | 0.2 | 9.66 | 0.2 | -5.7% |
| 11 | ຄ່າທຳນຽມຈົດທະບຽນ | 1.17 | 0.0 | 1.63 | 0.0 | 39.5% |
| 12 | ຄ່າທຳນຽມຕ່າງໆ | 263.66 | 6.3 | 317.73 | 6.9 | 20.5% |
| 13 | ຄ່າຊົບພະຍາກອນທຳມະຊາດ | 173.63 | 4.1 | 203.71 | 4.4 | 17.3% |
| 14 | ລາຍຮັບຈາກການຂາຍໄມ້ | 19.25 | 0.5 | 4.16 | 0.1 | -78.4% |
| 15 | ຄ່າພາກຫຼວງຈາກໄຟຟ້າ | 78.32 | 1.9 | 86.83 | 1.9 | 10.9% |

| | | | | | | |
|---|---|---|---|---|---|---|
| **II** | **ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ** | **881.41** | **100** | **989.33** | **21.4** | **12.2%** |
| 1 | ລາຍຮັບຈາກຄ່າເຊົ່າ | 7.18 | 0.81 | 4.02 | 0.1 | -44.0% |
| 2 | ຄ່າສໍາປະທານ | 19.06 | 2.16 | 26.06 | 0.6 | 36.8% |
| 3 | ຄ່າປັບໃໝ | 9.86 | 1.12 | 5.58 | 0.1 | -43.4% |
| 4 | ລາຍຮັບບໍລິການວິຊາການ | 16.93 | 1.92 | 84.17 | 1.8 | 397.3% |
| 5 | ເງິນປັນຜົນ | 510.15 | 57.88 | 492.92 | 10.6 | -3.4% |
| 6 | ດອກເບ້ຍເງິນກູ້ | 69.93 | 7.93 | 124.70 | 2.7 | 78.3% |
| 7 | ຄ່າບິນຜ່ານ | 212.55 | 24.12 | 251.61 | 5.4 | 18.4% |
| 8 | ກອງທຶນຮັກສາປ່າໄມ້ | - | 0.00 | 0.27 | 0.0 | |
| 9 | ລາຍຮັບອື່ນໆ | 35.75 | 4.06 | - | 0.0 | -100.0% |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກໍາ

## II. ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດ ປະຈໍາໄຕມາດ 1 ປີ 2019

ໃນໄຕມາດ 1 ຂອງປີ 2019 ການຈັດຕັ້ງປະຕິບັດລາຍຈ່າຍທັງໝົດ ປະຕິບັດໄດ້ ຈໍານວນ 5.891 ຕື້ກີບ ຫຼື ເທົ່າກັບ 17,6% ຂອງແຜນງົບປະມານປະຈໍາປີ ແລະ ເທົ່າກັບ 3,56% ຂອງ GDP, ຫຼຸດລົງ 10,8% ທຽບໃສ່ໄຕມາດ 1 ຂອງປີຜ່ານມາ; ໃນນີ້, ລາຍຈ່າຍບໍລິຫານປົກກະຕິ ປະຕິບັດໄດ້ 4.151 ຕື້ກີບ ກວມເອົາ 70% ຂອງລາຍຈ່າຍທັງໝົດ, ເທົ່າກັບ 18,9% ຂອງແຜນ ຫຼື ເທົ່າກັບ 2,51 % ຂອງ GDP, ເພີ່ມຂຶ້ນ 9,5% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ; ສ່ວນລາຍຈ່າຍລົງທຶນຂອງລັດ ປະຕິບັດໄດ້ 1.741 ຕື້ກີບ ກວມເອົາ 30% ຂອງລາຍຈ່າຍທັງໝົດ, ເທົ່າກັບ 15,2% ຂອງແຜນງົບປະມານ ຫຼື ເທົ່າກັບ 1,05% ຂອງ GDP ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 38,2%.

ລາຍຈ່າຍບໍລິຫານປົກກະຕິ ເພີ່ມຂຶ້ນ 9,5% ແລະ ລາຍຈ່າຍລົງທຶນຂອງລັດຫຼຸດລົງ 38,2% ຍ້ອນການຫຼຸດລົງຫຼາຍຂອງລາຍຈ່າຍລົງທຶນໂດຍສະເພາະແມ່ນ ການລົງທຶນຈາກຕ່າງປະເທດ ກູ້ຢືມເປັນໂຄງການ ຫຼຸດລົງ 48,9% ແລະ ຊ່ວຍເຫຼືອລ້າເປັນໂຄງການ ຫຼຸດລົງ 24,5% ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດລາຍຈ່າຍທັງໝົດຫຼຸດລົງ 10,8% ທຽບກັບໄຕມາດ 1 ປີ 2018 (ເສັ້ນສະແດງ 4).

**ເສັ້ນສະແດງ 4 ການຈັດຕັ້ງປະຕິບັດລາຍຈ່າຍທັງໝົດ ໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຫົວໜ່ວຍຕື້ກີບ; %)**




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກໍາ

**ຕາຕະລາງ 4 ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານແຫ່ງລັດ ແຍກຕາມປະເພດລາຍຈ່າຍ (ຫົວໜ່ວຍ ຕື້ກີບ)**

| ລ/ດ | ເນື້ອໃນ | ມັງກອນ-ມີນາ 2018 | ອັດຕາສ່ວນ | ມັງກອນ-ມີນາ 2019 | ອັດຕາສ່ວນ | % ເພີ່ມຫຼືຫຼຸດ |
|---|---|---|---|---|---|---|
| 1 | ເງິນເດືອນ ແລະ ເງິນອຸດໜູນ | 2,724.92 | 71.9 | 2,829.66 | 68.2 | 3.8% |
| | ເງິນເດືອນພື້ນຖານ | 2,210.79 | 58.3 | 2,265.29 | 54.6 | 2.5% |
| | ເງິນອຸດໜູນ | 514.14 | 13.6 | 564.36 | 13.6 | 9.8% |
| 2 | ລາຍຈ່າຍດັດສົມສິ່ງເສີມ | 361.21 | 9.5 | 481.92 | 11.6 | 33.4% |
| | ນະໂຍບາຍ ແລະ ຊ່ວຍໜູນ ອື່ນໆ | 299.56 | 7.9 | 396.60 | 9.6 | 32.4% |
| | ດັດສົມທົ່ວໄປ | 52.81 | 1.4 | 85.32 | 2.1 | 61.6% |
| | ປະກອບສ່ວນອົງການຈັດຕັ້ງ | 8.84 | 0.2 | | 0.0 | -100.0% |
| 3 | ບໍລິຫານ ແລະ ຊື້ໃໝ່ | 134.09 | 3.5 | 263.88 | 6.4 | 96.8% |
| 4 | ຊຳລະໜີພາຍໃນ | - | 0.0 | - | 0.0 | |
| 5 | ຊຳລະດອກເບ້ຍ | 565.64 | 14.9 | 568.40 | 13.7 | 0.5% |
| | ຕ່າງປະເທດ | 485.48 | 12.8 | 479.98 | 11.6 | -1.1% |
| | ພາຍໃນ | 80.17 | 2.1 | 88.41 | 2.1 | 10.3% |
| 6 | ລາຍຈ່າຍອື່ນໆ | 3.66 | 0.1 | 6.98 | 0.2 | 90.7% |
| | ເງິນແຮລັດຖະບານ | 3.66 | 0.1 | 6.98 | 0.2 | 90.7% |
| | ຄັງສະສົມແຫ່ງລັດ | - | 0.0 | - | 0.0 | |
| | ***ລາຍຈ່າຍບໍລິຫານປົກກະຕິ*** | ***3,789.53*** | ***100*** | ***4,150.84*** | ***100*** | ***9.5%*** |
| | ***ລາຍຈ່າຍລົງທຶນຂອງລັດ*** | ***2,814.45*** | ***100*** | ***1,740.53*** | ***100*** | ***-38.2%*** |
| 1 | ລົງທຶນພາຍໃນ | 420.96 | 15.0 | 492.28 | 28.3 | 16.9% |
| 2 | ລົງທຶນຕ່າງປະເທດ | 2,393.49 | 85.0 | 1,248.25 | 71.7 | -47.8% |
| | ກູ້ຢືມເປັນໂຄງການ | 2,289.13 | 81.3 | 1,169.41 | 67.2 | -48.9% |
| | ຊ່ວຍເຫຼືອລ້າເປັນໂຄງການ | 104.36 | 3.7 | 78.83 | 4.5 | -24.5% |
| | ຊ່ວຍເຫຼືອລ້າບໍ່ເປັນໂຄງການ | - | 0.0 | - | 0.0 | |
| | ***ລວມຍອດລາຍຈ່າຍ*** | ***6,603.98*** | | ***5,891.37*** | | ***-10.8%*** |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

## 2.1 ລາຍຈ່າຍບໍລິຫານປົກກະຕິ

ລາຍຈ່າຍບໍລິຫານປົກກະຕິ ໃນໄຕມາດ 1 ປີ 2019 ປະຕິບັດໄດ້ 4.151 ຕື້ກີບ ເພີ່ມຂຶ້ນ 9,5% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເນື່ອງການເພີ່ມຂຶ້ນຂອງລາຍຈ່າຍເງິນເດືອນ ແລະ ເງິນອຸດໜູນ ເພີ່ມຂຶ້ນ 3,8% ແລະ ລາຍຈ່າຍດັດສົມສິ່ງເສີມ ເພີ່ມຂຶ້ນ 33,4% ແລະ ລາຍຈ່າຍບໍລິຫານ ແລະ ຊື້ໃໝ່ ເພີ່ມຂຶ້ນ 96,8% ທຽບກັບໄຕມາດ 1 ປີ 2018 (ເສັ້ນສະແດງ 5).

**ເສັ້ນສະແດງ 5 ການຈັດຕັ້ງປະຕິບັດລາຍຈ່າຍບໍລິຫານປົກກະຕິ ໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຕື້ກີບ)**




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກໍາ

## 2.2 ລາຍຈ່າຍລົງທຶນ

ລາຍຈ່າຍລົງທຶນປະຕິບັດໄດ້ 1.741 ຕື້ກີບ ຫຼຸດລົງ 38,2% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ລາຍຈ່າຍລົງທຶນພາຍໃນເພີ່ມຂຶ້ນ 16,9% ແລະ ລາຍຈ່າຍລົງທຶນຕ່າງປະເທດຫຼຸດລົງ 47,8% ໂດຍສະເພາະ ການກູ້ຢືມເປັນໂຄງການ ຫຼຸດລົງ 48,9% ແລະ ຊ່ວຍເຫຼືອລ້າເປັນໂຄງການຫຼຸດລົງ 24,5% (ເສັ້ນສະແດງ 6).

**ເສັ້ນສະແດງ 6: ການຈັດຕັ້ງປະຕິບັດລາຍຈ່າຍລົງທຶນທັງໝົດ ໄຕມາດ 1 ປີ 2018 ແລະ ໄຕມາດ 1 ປີ 2019 (ຕື້ກີບ)**




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກໍາ

## III. ແຫຼ່ງດຸ່ນດ່ຽງງົບປະມານ

ຜ່ານການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໄຕມາດ 1 ປີ 2019 ເຫັນວ່າລາຍຮັບທັງໝົດປະຕິບັດໄດ້ 5.697 ຕື້ກີບ ແລະ ລາຍຈ່າຍທັງໝົດປະຕິບັດໄດ້ 5.891 ຕື້ກີບ ເຮັດໃຫ້ງົບປະມານຂາດດຸນ ຈຳນວນ 194 ຕື້ກີບ ເທົ່າກັບ 2,7% ຂອງແຜນງົບປະມານປີ 2019 ຫຼື ເທົ່າກັບ 0,12 %ຂອງ GDP ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ການຂາດດຸນຫຼຸດລົງ 86,2%. ສຳລັບແຫຼ່ງດຸ່ນດ່ຽງງົບປະມານ ແມ່ນມາຈາກແຫຼ່ງດຸ່ນດ່ຽງ ພາຍໃນ ແລະ ຕ່າງປະເທດ.

ທັງໝົດນັ້ນແມ່ນການສະຫຼຸບເບື້ອງຕົ້ນ ຜົນການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳໄຕມາດ 1 ປີ 2019 ຫຼັງຈາກນັ້ນ ຈະໄດ້ສະຫຼຸບຜົນການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳໄຕມາດ 2 ປີ 2019 (ເມສາ-ມິຖຸນາ 2018) ຊຶ່ງຂໍ້ມູນຕົວເລກງົບປະມານແຫ່ງລັດ ໄຕມາດ 1 ປີ 2019 ອາດມີການປ່ຽນແປງພາຍຫຼັງສົມທຽບຂໍ້ມູນກັບບັນດາກົມລາຍຮັບ, ກົມງົບປະມານແຫ່ງລັດ ແລະ ຄັງເງິນແຫ່ງຊາດ.